**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ອຸດສາຫະກຳ ແລະ ການຄ້າ
ລັດວິສາຫະກິດໄຟຟ້າລາວ

ເລກທີ: 0490 /ຟຟລ.ຫຟຟລ
ນະຄອນຫຼວງວຽງຈັນ, ວັນທີ: 05 FEB 2026

# ໜັງສືເຊີນເຂົ້າຮ່ວມປະມູນ

1. ລັດວິສາຫະກິດໄຟຟ້າລາວ ໄດ້ນຳໃຊ້ຮ່ວງເງິນແຜນງົບປະມານ ແລະ ການລົງທຶນ ປີ 2025 ເພື່ອເຊີນບັນດາບໍລິສັດ ທີ່ມີຄວາມສົນໃຈ ເຂົ້າຮ່ວມການປະມູນ ກ່ຽວກັບວຽກງານອານາໄມເສດໄມ້-ຂີ້ເຫຍື້ອ ອອກຈາກອ່າງເກັບນ້ຳ, ໂຄງການເຂື່ອນໄຟຟ້ານ້ຳງື່ມ4, ເມືອງພູກູດ, ແຂວງຊຽງຂວາງ, ໄລຍະການບໍລິການ 01 ປີ.
2. ການປະມູນນີ້ຈະດຳເນີນຕາມຂັ້ນຕອນການປະມູນເປີດກ້ວາງພາຍໃນ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ສະບັບເລກທີ: 30/ສພຊ, ລົງວັນທີ: 2 ພະຈິກ 2017. ແລະ ເອກະສານ ຄຳແນະນຳການໃຊ້ກົດໝາຍ ສະບັບ ເລກທີ: 0477/ກງ, ລົງວັນທີ: 13 ກຸມພາ 2019, ຄຳແນະນຳເພີ່ມເຕີມສຳລັບ ມາດຕາ 23 ແລະ ມາດຕາ 31 ຂອງຄຳແນະນຳການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ: 1995/ກງ, ລົງວັນທີ: 24 ມິຖຸນາ 2019.
3. ຜູ້ປະມູນຕ້ອງມີສຳເນົາເອກະສານໃບອະນຸຍາດດຳເນີນທຸລະກິດດ້ານການບໍລິການເກັບຂີ້ເຫຍື້ອ, ບໍລິການອື່ນໆທີ່ກ່ຽວຂ້ອງ  ແລະ ໃບມອບພັນທະອາກອນປີ 2024-2025 ທີ່ຖືກຕ້ອງຕາມກົດໝາຍ.
4. ບໍລິສັດໃດທີ່ມີເງື່ອນໄຂເໝາະສົມ ແລະ ມີຄວາມສົນໃຈສາມາດຕິດຕໍ່ພົວພັນ ແລະ ເຮັດໜັງສືເຈດຈຳນົງຊື້ເອກະສານປະມູນ ໄດ້ທີ່ລັດວິສາຫະກິດໄຟຟ້າລາວ (ສຳນັກງານໃຫຍ່), ຖະໜົນມິດຕະພາບລາວ-ໄທ, ຕູ້ ປ.ນ 309, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ. ໂທ: (856-21) 316094-1614, ທີ່ພະແນກຈັດຊື້-ຈັດຈ້າງ (ຫ້ອງການໄຟຟ້າລາວ) ຊັ້ນ 01 ຕຶກສຳນັກງານໃຫຍ່ ລັດວິສາຫະກິດໄຟຟ້າລາວ ໃນໂມງລັດຖະການ, ເລີ່ມແຕ່ວັນທີ: 13/02/2026 ຫາ ວັນທີ: 20 /03/2026, ໃນລາຄາ 500.000 ກີບ/ຊອງ ຈຳນວນເງິນດັ່ງກ່າວຈະບໍ່ມີການສົ່ງຄືນ (ວິທີການຊຳລະຕ້ອງຈ່າຍເປັນເງິນສົດ).
5. ຜູ້ປະມູນຕ້ອງລົງສຳຫຼວດສະຖານທີ່ຕົວຈິງ ກ່ອນການເປີດຊອງປະມູນ; ທີ່ຕັ້ງໂຄງການ: ເຂື່ອນໄຟຟ້ານ້ຳງື່ມ4, ເມືອງພູກູດ, ແຂວງຊຽງຂວາງ, ສາມາດຕິດຕໍ່ພົວພັນ ທ້າວ ຊ້ຽນມາໄລ ນອນທຸ່ນ ໂຄງການເຂື່ອນໄຟຟ້ານ້ຳງື່ມ4, ເມືອງພູກູດ, ແຂວງຊຽງຂວາງ; ເບີໂທ: 020 28177526 - 020 52395019.
6. ຊອງປະມູນຕ້ອງສົ່ງກ່ອນເວລາ 09:30 ໂມງ ຂອງວັນທີ: 20 /03/2026 ທີ່ຫ້ອງປະຊຸມຊັ້ນ 08, ຫ້ອງ 802, ສຳນັກງານໃຫຍ່. ຊອງປະມູນໃດສົ່ງຊ້າເກີນເວລາທີ່ໄດ້ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆຊອງໄດ້ເປີດໃນເວລາດຽວກັນໂດຍຊ້ອງໜ້າຄະນະກຳມະການຈັດຊື້ ລັດວິສາຫະກິດໄຟຟ້າລາວ,  ຕາງໜ້າກະຊວງການເງິນ ແລະ ຕົວແທນຂອງຜູ້ເຂົ້າຮ່ວມແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມ.
7. ຜູ້ປະມູນຕ້ອງປະກອບໜັງສືຄ້ຳປະກັນຊອງປະມູນໃນມູນຄ່າ 2% ຂອງມູນຄ່າທີ່ສະເໜີໃນການປະມູນ ເປັນໜັງສືຄ້ຳປະກັນຈາກທະນາຄານ ຫຼື ແຊັກວິຊ່າ ທີ່ນຳໃຊ້ເຖິງ ວັນທີ:     /07/2026.

**ຜູ້ອຳນວຍການໃຫຍ່**

ພະລັງງານ ແລະ ບໍ່ແຮ່ ບໍລິສັດລັດ ວິສາຫະກິດໄຟຟ້າລາວ ELECTRICITE DU LAOS ນະຄອນຫຼວງວຽງຈັນ

**ປອ. ອາຄົມເດດ ວົງໄຊ**
ຜູ້ອຳນວຍການໃຫຍ່

ຖະໜົນມິດຕະພາບລາວ-ໄທ, ຕູ້ ປ.ນ 309, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ ສ ປ ປ ລາວ.
ໂທ: (856-21) 316094-1614 ແຟັກ: (856-21) 316118; 263794; ອີເມລ: edlmdo@edl.com.la; ເວັບໄຊ: www.edl.com.la

ສະແກນດ້ວຍ CamScanner